SBA
U.S. Small Business Administration

**ອົງການຄຸ້ມຄອງທຸລະກິດຂະໜາດນ້ອຍແຫ່ງສະຫະລັດ (SBA)**
**ໃບແຈ້ງຂໍ້ມູນ**
**ເງິນກູ້ໄພພິບັດເພື່ອຟື້ນຟູຄວາມເສຍຫາຍດ້ານເສດຖະກິດ**

ການຖະແຫຼງໄພພິບັດຂອງ SBA ເນື່ອງຈາກການຢັ້ງຢືນຄວາມເສຍຫາຍດ້ານເສດຖະກິດຂອງຜູ້ວ່າການລັດ

ລັດ: **MISSISSIPPI #12173** (ໄພພິບັດ # MS-00038)

ເຂດປົກຄອງ: **George, Hancock, Harrison, Jackson, Pearl River ແລະ Stone**; *ແລະ ເຂດປົກຄອງໃກ້ຄຽງ Forest, Greene, Lamar, Marion ແລະ Perry ໃນ***ລັດ Mississippi**; *ເຂດປົກຄອງໃກ້ຄຽງ Mobile ໃນ* **ລັດ Alabama**; *ແລະ ບັນດາຄຸ້ມໃກ້ຄຽງ Saint Tammany ແລະ Washington ໃນ***ລັດ Louisiana.**

ເຫດການ ແລະ ວັນທີເກີດເຫດ: **ເສດຄາບນ້ຳມັນ BP ຕົກເຮ່ຍໃນນ້ຳເລິກ**
**ເກີດຂຶ້ນໃນວັນທີ 20 ເດືອນເມສາ 2010 ແລະ ສືບຕໍ່ມາ**

**ກຳນົດຮັບຄຳຮ້ອງສະໝັກຊ້າສຸດ: ວັນທີ 14 ເດືອນກຸມພາ 2011**

**ປະເພດເງິນກູ້ໄພພິບັດ:**

- ເງິນກູ້ໄພພິບັດເພື່ອຟື້ນຟູຄວາມເສຍຫາຍດ້ານເສດຖະກິດ (EIDL) - ແມ່ນເງິນກູ້ໃຊ້ເປັນຕົ້ນທຶນດຳເນີນງານເພື່ອຊ່ວຍບັນດາໜ່ວຍທຸລະກິດຂະໜາດນ້ອຍ, ກຸ່ມສະຫະກອນກະສິກຳຂະໜາດນ້ອຍ ແລະ ບັນດາເອກະຊົນ ແລະ ອົງການບໍ່ຫວັງຜົນກຳໄລທຸກຂະໜາດ ໃຫ້ຕອບສະໜອງໄດ້ພັນທະທາງການເງິນຕາມປົກກະຕິ ແລະ ທີ່ຈຳເປັນຂອງເຂົາເຈົ້າທີ່ບໍ່ສາມາດຕອບສະໜອງໄດ້ອັນເປັນຜົນໂດຍກົງມາຈາກໄພພິບັດ. ເງິນກູ້ເຫຼົ່ານີ້ມີຈຸດປະສົງໃຫ້ການຊ່ວຍເຫຼືອໄປຕະຫຼອດໄລຍະການຟື້ນຟູຈາກໄພພິບັດ.
- ການຊ່ວຍເຫຼືອ EIDL ແມ່ນມີໃຫ້ພຽງແຕ່ກັບນິຕິບຸກຄົນ ແລະ ເຈົ້າຂອງຂອງພວກມັນຜູ້ທີ່ບໍ່ສາມາດສະໜອງໃຫ້ເພື່ອການຟື້ນຟູຂອງເຂົາເຈົ້າເອງຈາກແຫຼ່ງທຶນທີ່ບໍ່ແມ່ນແຫຼ່ງທຶນລັດຖະບານ, ຕາມການກຳນົດໂດຍອົງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA).

**ຂໍ້ກຳນົດດ້ານການໃຫ້ກູ້ຢືມ:**

- ປະຫວັດການກູ້ຢືມ - ຜູ້ຂໍກູ້ຢືມຕ້ອງມີປະຫວັດການກູ້ຢືມທີ່ເປັນທີ່ຍອມຮັບໄດ້ຕໍ່ກັບອົງການ (SBA).
- ການຊຳລະຄືນ - ຜູ້ຂໍກູ້ຢືມຕ້ອງສະແດງໃຫ້ເຫັນຄວາມສາມາດໃນການຊຳລະເງິນກູ້ຄືນ.
- ຊັບສິນຄ້ຳປະກັນ - ຊັບສິນຄ້ຳປະກັນແມ່ນຈຳເປັນຕ້ອງມີສຳລັບທຸກເງິນກູ້ EIDL ທີ່ສູງກວ່າ 5.000 ໂດລາ. SBA ຈະເອົາອະສັງຫາລິມະຊັບເປັນຊັບສິນຄ້ຳປະກັນການກູ້ຢືມເມື່ອຜູ້ຂໍກູ້ຢືມມີຊັບສິນດັ່ງກ່າວ. SBA ຈະບໍ່ຫຼຸດຈຳນວນເງິນກູ້ຢືມລົງເນື່ອງຈາກການຂາດຊັບສິນຄ້ຳປະກັນ, ແຕ່ SBA ຈຳກຳນົດໃຫ້ຜູ້ກູ້ຢືມໃຫ້ຄຳໝັ້ນສັນຍາໃຫ້ຊັບສິນຄ້ຳປະກັນທີ່ມີຢູ່.

**ອັດຕາດອກເບ້ຍ:**

| | |
|---|---|
| ໜ່ວຍທຸລະກິດ ແລະ ກຸ່ມສະຫະກອນກະສິກຳຂະໜາດນ້ອຍທີ່ບໍ່ມີເງິນກູ້ຢືມຈາກບ່ອນອື່ນ: | 4% |
| ອົງການບໍ່ຫວັງຜົນກຳໄລທີ່ບໍ່ມີເງິນກູ້ຢືມຈາກບ່ອນອື່ນ: | 3% |

**ໄລຍະການກູ້ຢືມ:**

- ກົດໝາຍອະນຸຍາດໃຫ້ມີໄລຍະການກູ້ຢືມສູງເຖິງ 30 ປີ.
- SBA ຈະກຳນົດໄລຍະກູ້ຢືມຂອງແຕ່ລະເງິນກູ້ຢືມອີງຕາມຄວາມສາມາດຊຳລະຄືນຂອງຜູ້ກູ້ຢືມ. ໂດຍອີງໃສ່ສະພາບການເງິນຂອງແຕ່ລະຜູ້ກູ້ຢືມ, SBA ຈະກຳນົດຈຳນວນເງິນທີ່ຕ້ອງຊຳລະຄືນໃນແຕ່ລະງວດຢ່າງເໝາະສົມ, ເຊິ່ງເປັນການກຳນົດໃນຕົວໄລຍະກູ້ຢືມຕົວຈິງ.

**ກຳນົດຈຳນວນເງິນກູ້ຢືມ**

- <u>ເງິນກູ້ຢືມເພື່ອຟື້ນຟູຄວາມເສຍຫາຍດ້ານເສດຖະກິດ (EIDL)</u> - ກົດໝາຍກຳນົດໃຫ້ເງິນກູ້ຢືມ EIDL ສູງເຖິງ 2.000.000 ໂດລາ ເພື່ອໃຊ້ເຂົ້າໃນການບັນເທົາຄວາມເສຍຫາຍດ້ານເສດຖະກິດທີ່ເກີດຈາກໄພພິບັດ. ຈຳນວນຕົວຈິງຂອງແຕ່ລະເງິນກູ້ຢືມແມ່ນຂຶ້ນກັບຄວາມເສຍຫາຍດ້ານເສດຖະກິດຕົວຈິງທີ່ກຳນົດໂດຍ SBA, ປະກັນໄພການຢຸດດຳເນີນທຸລະກິດນ້ອຍກວ່າ ແລະ ປັດໃຈການຟື້ນຟູອື່ນໆໄປຈົນເຖິງເຂດກຳນົດການໃຫ້ກູ້ຢືມທາງດ້ານບໍລິຫານ. SBA ຍັງພິຈາລະນາການປະກອບສ່ວນທີ່ເປັນໄປໄດ້ທີ່ມີຢູ່ຈາກໜ່ວຍທຸລະກິດ ແລະ/ຫຼື ເຈົ້າຂອງໜ່ວຍທຸລະກິດ ຫຼື ສາຂາທຸລະກິດນັ້ນ. ຖ້າທຸລະກິດໃດໜຶ່ງແມ່ນແຫຼ່ງສຳຄັນຂອງການຈ້າງງານ, SBA ມີອຳນາດລະເວັ້ນກຳນົດເງິນກູ້ 2.000.000 ໂດລາ ທີ່ກົດໝາຍກຳນົດໄວ້.

**ຂໍ້ຈຳກັດດ້ານການໄດ້ຮັບເງິນກູ້:**

- **<u>ການບໍ່ປະຕິບັດຕາມ</u>**: ຜູ້ຂໍກູ້ຢືມທີ່ບໍ່ປະຕິບັດໄດ້ຕາມກຳນົດເງື່ອນໄຂຂອງເງິນກູ້ທີ່ໃຫ້ໄປໃນເມື່ອກ່ອນແມ່ນບໍ່ມີສິດໄດ້ຮັບເງິນກູ້. ສິ່ງນີ້ລວມທັງຜູ້ກູ້ຢືມໃນເມື່ອກ່ອນຜູ້ທີ່ບໍ່ໄດ້ຮັກສາປະກັນໄພນ້ຳຖ້ວມຕາມການກຳນົດ.

**ຂໍ້ກຳນົດດ້ານການປະກັນໄພ:**

- ເພື່ອປົກປ້ອງຜູ້ກູ້ຢືມແຕ່ລະຄົນ ແລະ ອົງການ, SBA ຮຽກຮ້ອງໃຫ້ຜູ້ກູ້ຢືມຕ້ອງມີ ແລະ ຮັກສາໄວ້ການປະກັນໄພຢ່າງເໝາະສົມ. ຜູ້ກູ້ຢືມທຸກເງິນກູ້ພັນຄົງ (ຫຼາຍກວ່າ 5.000 ໂດລາ) ຕ້ອງໄດ້ຊື້ ແລະ ຮັກສາໄວ້ປະກັນໄພອັນຕະລາຍຕ່າງໆເປັນເວລາຕະຫຼອດໄລຍະກູ້ຢືມເງິນຕໍ່ກັບຊັບສິນຄ້ຳປະກັນ. ຕາມກົດໝາຍ, ຜູ້ກູ້ຢືມທີ່ມີຊັບສິນຄ້ຳປະກັນທີ່ຕັ້ງຢູ່ໃນເຂດອັນຕະລາຍພິເສດຈາກນ້ຳຖ້ວມ ຕ້ອງໄດ້ຊື້ ແລະ ຮັກສາໄວ້ປະກັນໄພນ້ຳຖ້ວມສຳລັບມູນຄ່າເຕັມສ່ວນທີ່ປະກັນໄດ້ຂອງຊັບສິນຄ້ຳປະກັນນັ້ນເປັນເວລາຕະຫຼອດໄລຍະກູ້ຢືມ.

**ສຳລັບຂໍ້ມູນເພີ່ມເຕີມ, ໃຫ້ຕິດຕໍ່ຫາສູນບໍລິການລູກຄ້າການຊ່ວຍເຫຼືອໄພພິບັດຂອງອົງການ SBA ທີ່**

(800) 659-2955 ຫຼື <u>disastercustomerservice@sba.gov</u>

<u>www.sba.gov/services/disasterassitance</u>